ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0004 /ກປ.2000.

# <u>ແຈ້ງການ</u>

<u>/ເຖິງ</u> : ທ່ານຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ.

<u>/ເລື່ອງ</u> : ການຄົ້ນຄ້ວາພິຈາລະນາ ແລະອອກອະນຸຍາດໃຫ້ບຸກຄົນຕັດໄມ້ ເພື່ອປຸກສ້າງ ແລະ ສ້ອມແປງບ່ອນພັກພາອາໃສ.

- ອີງຕາມກົດໝາຍປ່າໄມ້ ສະບັບເລກທີ 01/96 ລົງວັນທີ 11/10/1996
- ອີງຕາມແຈ້ງການຂອງຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1893/ຫສນຍ, ລົງວັນທີ 29/10/1999.

ກະຊວງກະສິກຳ ແລະປ່າໄມ້ ຂໍຖືເປັນກຽດ ແຈ້ງມາໃຫ້ຊາບວ່າ : ໃນເມື່ອກ່ອນໂດຍຕອບສະໜອງ ຕໍ່ຂໍ້ສະເໜີຂອງທ້ອງຖິ່ນ ແລະ ບຸກຄົນ ວ່າດ້ວຍການ ຂໍອະນຸຍາດຕັດໄມ້ຢູ່ໃນດິນນາ ແລະດິນສວນ ເພື່ອປຸກສ້າງ ແລະ ສ້ອມແປງບ່ອນພັກອາໃສ ແລະຂະແໜງການທີ່ກ່ຽວຂ້ອງກໍໄດ້ອອກລະບຽບການຈຳນວນໜຶ່ງ ເພື່ອເປັນບ່ອນອີງໃຫ້ທ້ອງຖິ່ນໃນການຄົ້ນຄ້ວາ, ພິຈາລະນາ ແລະ ອອກອະນຸຍາດໄມ້ປຸກສ້າງໃຫ້ຜູ້ທີ່ມີເງື່ອນໄຂເປັນປົກກະຕິຕະລອດມາ. ໂດຍອີງໃສ່ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີສະບັບທີ່ກ່າວຂ້າງເທິງນັ້ນ, ການປະຕິບັດນະໂຍບາຍໄມ້ປຸກສ້າງໃນຕໍ່ໜ້ານີ້ແມ່ນຈະຕ້ອງໄດ້ປະຕິບັດຕາມກົດໝາຍປ່າໄມ້ຢ່າງເຄັ່ງຄັດ. ເນື້ອໃນຂອງກົດໝາຍດັ່ງກ່າວຢູ່ມາດຕາ 28 ໄດ້ລະບຸໄວ້ວ່າ: " <u>ການຕັດໄມ້ຢູ່ໃນປ່າຜະລິດຂອງບ້ານ ເພື່ອປຸກສ້າງ, ສ້ອມແປງແລະໃຊ້ສອຍໃນຄອບຄົວ ອະນຸຍາດໃຫ້ແຕ່ ໃນເຂດປ່າຜະລິດຂອງບ້ານ ແລະ ໄມ້ປະເພດບໍ່ຫວງຫ້າມ ຊຶ່ງບໍລິມາດບໍ່ເກີນຫ້າແມັດກ້ອນ ໄມ້ທ່ອນຕໍ່ໜຶ່ງຄອບຄົວ ທີ່ມີຄວາມຈຳເປັນ ຊຶ່ງຕ້ອງຕັດໃນເຂດທີ່ກຳນົດໃຫ້ ແລະປະຕິບັດຕາມລະບຽບການ ທີ່ອຳນາດການປົກຄອງບ້ານກຳນົດອອກ.ສ່ວນການເກັບກູ້ຜະລິດຕະພັນປ່າໄມ້ ເພື່ອໃຊ້ສອຍໃນຄອບຄົວນັ້ນ ກໍໃຫ້ປະຕິບັດຕາມກົດລະບຽບຂອງບ້ານ ຊຶ່ງຮັບຮອງເອົາໂດຍຫ້ອງການກະສິກຳ-ປ່າໄມ້ເມືອງ</u>".

ລະນັ້ນ ໃນພາກຕົວຈິງ,ກະຊວງກະສິກຳແລະປ່າໄມ້ ມອບໃຫ້ພະແນກກະສິກຳແລະປ່າໄມ້ແຂວງ, ກຳແພງນະຄອນແລະເຂດພິເສດເປັນເຈົ້າການໃນການແນະນຳທາງດ້ານວິຊາການໃຫ້ແກ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງແລະປະກອບຄຳເຫັນໃຫ້ອຳນາດການປົກຄອງບ້ານ ກ່ຽວກັບການຈັດຕັ້ງປະຕິບັດແລະ ການສ້າງກົດລະບຽບບ້ານເຮັດໃຫ້ການຄົ້ນຄວ້າພິຈາລະນາແລະອອກອະນຸຍາດ ໃນການຕັດໄມ້ຢູ່ໃນປ່າຜະລິດຂອງບ້ານເພື່ອປຸກສ້າງ,ສ້ອມແປງແລະ ໃຊ້ສອຍໃນຄອບຄົວໃຫ້ຖືກຕ້ອງ ແລະສອດຄ່ອງຕາມເນື້ອໃນຈິດໃຈມາດຕາ 28 ຂອງ ກົດໝາຍປ່າໄມ້ ທີ່ກ່າວຂ້າງເທິງນັ້ນ.

ນັບແຕ່ນີ້ເປັນຕົ້ນໄປ, ບໍ່ຄວນໃຫ້ບຸກຄົນແລະ ພາກສ່ວນຕ່າງໆ ນຳສະເໜີ ກ່ຽວກັບການຂໍອະນຸຍາດຕັດໄມ້ປຸກສ້າງນີ້ໄປຍັງກະຊວງກະສິກຳ ແລະ ປ່າໄມ້ເພື່ອພິຈາລະນາແລະຕົກລົງຕື່ມອີກຍ້ອນມັນບໍ່ສອດຄ່ອງກັບພາລະບົດບາດ ແລະ ລະບຽບກົດໝາຍຂອງລັດທີ່ໄດ້ກຳນົດໄວ້

ດັ່ງນັ້ນ ຈຶ່ງແຈ້ງມາເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ວຽງຈັນ, ວັນທີ 05 JAN 2[illegible]

ລັດຖະມົນຕີ ວ່າການກະຊວງກະສິກຳ ແລະປ່າໄມ້.

ກະຊວງກະສິກຳ ແລະ ປ່າໄມ້

ລັດຖະມົນຕີ

ສ່ຽນ ສະພັງທອງ

ບ່ອນນຳສົ່ງ:

- ຫ້ອງວ່າການສູນກາງພັກ (ເພື່ອໃຊ້ຕາງລາຍງານ)
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ເພື່ອໃຊ້ຕາງລາຍງານ)
- ຫ້ອງວ່າການແຂວງ, ກຳແພງນະຄອນ ແລະເຂດພິເສດ (ເພື່ອຊາບ)
- ກົມປ່າໄມ້.
- ເກັບມ້ຽນ.